# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee

**I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ............................................ ໜ້າ 01 – 07**

**II. ການເຄື່ອນໄຫວວຽກງານ ຂອງການນຳພັກ ປປ ລາວ...................................... ໜ້າ 08 - 09**

**III. ການເຄື່ອນໄຫວຂອງຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ..................... ໜ້າ 10 – 14**

ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ມັງກອນ 2022**

**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Fax 021 414043, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຢູ່ ສປປ ລາວ

### 1) ສະຖານະການໂຄວິດ-19

ພະຍາດໂຄວິດ-19 ຢູ່ ສປປ ລາວ ຍັງສືບຕໍ່ແຜ່ລະບາດ, ແຕ່ຈຳນວນຜູ້ຕິດເຊື້ອ ແມ່ນມີທ່າອ່ຽງຫຼຸດລົງ ແລະ ມີອາການເບົາບາງ, ເຊິ່ງໄດ້ຮັບອະນຸຍາດໃຫ້ຕິດຕາມ ແລະ ປິ່ນປົວຢູ່ເຮືອນ. ລັດຖະບານ ໄດ້ອອກແຈ້ງການຫຼຸດຜ່ອນມາດຕະການໃນການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດ ຂອງພະຍາດໂຄວິດ-19 ເຊັ່ນ: ອະນຸຍາດໃຫ້ຜູ້ທີ່ມີຈຸດປະສົງເດີນທາງເຂົ້າມາລາວ ຈຳກັດບໍລິເວນຢູ່ສະຖານທີ່ພັກເຊົາຂອງຕົນ ໄລຍະ 7 ມື້, ຖ້າບໍ່ພົບເຊື້ອສາມາດໃຊ້ຊີວິດໄດ້ປົກກະຕິ ແຕ່ກໍຕ້ອງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ; ເຫັນດີໃຫ້ກະຊວງການຕ່າງປະເທດ ອອກວີຊາ ໃຫ້ນັກທ່ອງທ່ຽວເປັນກຸ່ມ ທີ່ຈະເດີນທາງມາ ສປປ ລາວ ພາຍໃຕ້ໂຄງການທ່ອງທ່ຽວສີຂຽວ, ຖ້ານັກທ່ອງທ່ຽວກວດບໍ່ພົບເຊື້ອໂຄວິດ ພາຍໃນ 48 ຊົ່ວໂມງ ພາຍຫຼັງຮອດ ສປປ ລາວ ແມ່ນອະນຸຍາດໃຫ້ເຄື່ອນໄຫວຕາມແຜນທ່ອງທ່ຽວໄດ້; ອະນຸຍາດໃຫ້ເປີດດ່ານທ້ອງຖິ່ນ ແລະ ດ່ານປະເພນີສຳລັບຂົນສົ່ງສິນຄ້າ ຖ້າເຫັນວ່າ ບັນດາແຂວງ ແລະ ທ້ອງຖິ່ນ ມີຄວາມພ້ອມຮອບດ້ານ. ຮອດວັນທີ 31 ມັງກອນ 2022, ທົ່ວປະເທດ ມີຜູ້ຕິດເຊື້ອສະສົມ 133,853 ເພີ່ມຂຶ້ນ 22,793 ຄົນ; ປິ່ນປົວດີ 128,285 ຄົນ; ກຳລັງປິ່ນປົວຢູ່ໂຮງໝໍ 5,568 ຄົນ, ເສຍຊີວິດສະສົມທັງໝົດ 547 ຄົນ ເພີ່ມຂຶ້ນ 175 ຄົນ ຖ້າທຽບໃສ່ເດືອນຜ່ານມາ; ແລະ ຮອດວັນທີ 31/1/2022, ປະຊາຊົນລາວ ທີ່ໄດ້ສັກວັກແຊງຄົບ 2 ເຂັມ ມີ 4,102,017 ຄົນ, ໄດ້ສັກເຂັມທີໜຶ່ງ 4,746,747 ຄົນ.

### 1) ນາຍົກລັດຖະມົນຕີ ສປປ ລາວ ຢ້ຽມຢາມ ສສ ຫວຽດນາມ

ວັນທີ 8 - 10 ມັງກອນ 2022, ທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ໄດ້ຢ້ຽມຢາມ ສ.ສ ຫວຽດນາມ ຢ່າງເປັນທາງການ, ໄດ້ພົບປະກັບ ທ່ານ ຟ້າມ ມິງຈິງ, ນາຍົກລັດຖະມົນຕີ ແຫ່ງ ສສ ຫວຽດນາມ ແລະ ເຂົ້າຮ່ວມກອງປະຊຸມຄັ້ງທີ 44 ຂອງ ຄະນະກຳມະການຮ່ວມມືທະວິພາຄີ ລະຫວ່າງສອງລັດຖະບານ, ຮັດແໜ້ນ, ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງປະເທດ ລາວ ແລະ ຫວຽດນາມ ປະຈຳປີ 2022. ກອງປະຊຸມດັ່ງກ່າວ ໄດ້ຕີລາຄາສູງຜົນຂອງການປະຕິບັດບົດບັນທຶກກອງປະຊຸມຄະນະກຳມະການຮ່ວມມືທະວິພາຄີ ລະຫວ່າງສອງລັດຖະບານຄັ້ງທີ 43 ກໍຄືບັນດາຂໍ້ຕົກລົງວ່າດ້ວຍການຮ່ວມມື ປະຈຳປີ 2021 ຜ່ານມາ ແລະ ປຶກສາຫາລືທິດທາງແຜນການຮ່ວມມື ໃນປີ 2022; ການຈັດຕັ້ງປະຕິບັດ ຂໍ້ຕົກລົງປີ 2021 ສາມາດບັນລຸຜົນສຳເລັດໃນຫຼາຍດ້ານ ເປັນຕົ້ນແມ່ນການຮ່ວມມືດ້ານການເມືອງ-ການຕ່າງປະເທດ; ດ້ານປ້ອງກັນຊາດປ້ອງກັນຄວາມສະຫງົບ ແມ່ນສືບຕໍ່ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ, ມີການເຄື່ອນໄຫວແລກປ່ຽນຄະນະຜູ້ແທນຂັ້ນສູງຂອງສອງພັກ, ສອງລັດຢ່າງເປັນປົກກະຕິ; ການຮ່ວມມືໃນຂົງເຂດການສຶກສາ-ບຳລຸງສ້າງ ໄດ້ຮັບການເປີດກວ້າງດ້ວຍຫຼາຍຮູບການ. ສຳລັບທິດທາງແຜນການຮ່ວມມືໃນປີ 2022, ສອງຝ່າຍ ໄດ້ຕົກລົງເຫັນດີເປັນເອກະພາບ ສືບຕໍ່ຈັດຕັ້ງຜັນຂະຫຍາຍບັນດາເນື້ອໃນຖະແຫຼງການຮ່ວມ ແລະ ຂໍ້ຕົກລົງ ລະຫວ່າງການນຳຂັ້ນສູງ ຂອງສອງປະເທດໃຫ້ເປັນຮູບປະທຳ, ສືບຕໍ່ຮ່ວມມືຢ່າງແໜ້ນແຟ້ນ ໃນການຮັກສາສະຖຽນລະພາບທາງດ້ານການເມືອງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຂອງແຕ່ລະປະເທດ; ສ້າງເສັ້ນຊາຍແດນ ລາວ-ຫວຽດນາມ ໃຫ້ເປັນຊາຍແດນ ແຫ່ງສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະ ພັດທະນາຮອບດ້ານ, ສະໜັບສະໜູນ ແລະ ສ້າງຄວາມເຊື່ອໝັ້ນເຊິ່ງກັນ ແລະ ກັນ ໃນເວທີພາກພື້ນ ແລະ ສາກົນ; ສືບຕໍ່ຜັນຂະຫຍາຍບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການຮ່ວມມືດ້ານຄົມມະນາຄົມ ແລະ ຂົນສົ່ງ, ການຮ່ວມມືພັດທະນາບັນດາໂຄງການໄຟຟ້າຢູ່ລາວ, ເຊື່ອມຕໍ່ລະບົບໄຟຟ້າ ແລະ ການຊື້-ຂາຍ ໄຟຟ້າ. ຄຽງຄູ່ກັນນີ້ ສອງຝ່າຍ ຈະພ້ອມກັນສືບຕໍ່ເພີ່ມທະວີການຮ່ວມມື ແລະ ສ້າງເງື່ອນໄຂ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການຮ່ວມມືດ້ານການຄ້າ, ການລົງທຶນ, ການສຶກສາ ກໍຄືການພັດທະນາຊັບພະຍາກອນມະນຸດຂອງ

ສອງປະເທດ ແລະ ການຮ່ວມມືໃນບັນດາຂົງເຂດ ທີ່ສອງຝ່າຍມີທ່າແຮງບົ່ມຊ້ອນ. ການຢ້ຽມຢາມຄັ້ງນີ້. ສອງຝ່າຍໄດ້ລົງນາມ ແລະ ມອບ-ຮັບ ເອກະສານຮ່ວມມືຂອງບັນດາກະຊວງ ແລະ ພາກທຸລະກິດ ຈຳນວນ 09 ສະບັບ, ໃນນີ້ພາກລັດວິສາຫະກິດ 01 ສະບັບ. ພິເສດ, ສອງຝ່າຍຈະໄດ້ຮ່ວມກັນຈັດຕັ້ງການສະເຫຼີມສະຫຼອງປີສາມັກຄີມິດຕະພາບໃນປີ 2022 ກໍ່ຄືວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ- ຫວຽດນາມ ຄົບຮອບ 45 ປີ ໃຫ້ມີບັນຍາກາດຟົດຟື້ນ ແລະ ເຕັມໄປດ້ວຍຄວາມໝາຍສຳຄັນ ເພື່ອໃຫ້ຄົນຮຸ່ນຫຼັງໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ສາຍພົວພັນພິເສດຂອງສອງປະເທດ.

**2) ການນຳພັກ-ລັດ ຢ້ຽມຢາມນາຍ ແລະ ພົນທະຫານ ໃນໂອກາດວັນສ້າງຕັ້ງກອງທັບ ຄົບຮອບ 73 ປີ**

ວັນທີ 19/1/2022, ເນື່ອງໃນໂອກາດ ສະເຫຼີມສະຫຼອງ ວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 73 ປີ (20/1/1949 - 20/1/2022) ການນຳຂັ້ນສູງຂອງພັກ - ລັດ ເຊິ່ງນຳໂດຍ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດ; ສະຫາຍ ພັນຄຳ ວິພາວັນ, ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ; ສະຫາຍ ກິແກ້ວ ໄຂຄຳພິທູນ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ; ສະຫາຍ ສະເຫຼີມໄຊ ກົມມະສິດ, ກຳມະການກົມການເມືອງສູນກາງພັກ, ລັດຖະມົນຕີຕ່າງປະເທດ ໄດ້ລົງຢ້ຽມຢາມພົບປະໂອ້ລົມຕໍ່ນາຍ ແລະ ພົນທະຫານ ຢູ່ກອງພົນຕ່າງໆຢູ່ ສູນກາງ ແລະ ທ້ອງຖິ່ນ ແລະ ໄດ້ມອບວັດຖຸປັດໄຈຈຳນວນໜຶ່ງ ເພື່ອເປັນຂອງຂວັນ ແລະ ກຳລັງໃຈໃຫ້ແກ່ນາຍ ແລະ ພົນທະຫານໃນການປະຕິບັດໜ້າທີ່ວຽກງານ.

## 2. ການເຄື່ອນໄຫວຂອງບັນດາພັກການເມືອງປະເທດເພື່ອນມິດ.

### 1) ພັກກອມມູນິດຫວຽດນາມ

ວັນທີ 8/1/2022, ສະຫາຍ ດິງຕຽນຢຸ້ງ, ກຳມະການກົມການເມືອງ, ເລຂາພັກນະຄອນຫຼວງຮ່າໂນ້ຍ ໄດ້ເຂົ້າຮ່ວມກອງປະຊຸມສະຫຼຸບວຽກງານກໍ່ສ້າງພັກ ປະຈຳປີ 2021, ຜັນຂະຫຍາຍບົດຮຽນປີ 2022. ສະຫາຍ ຫງວຽນວັນຟອງ, ຮອງເລຂາພັກນະຄອນ ໄດ້ລາຍງານກ່ຽວກັບສະພາບການ ຕໍ່ໜ້າຄວາມຫຍຸ້ງຍາກ, ສິ່ງທ້າທາຍຍ້ອນຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19, ແຕ່ບັນດາຄະນະໜ່ວຍງານຮັບຜິດຊອບວຽກງານກໍ່ສ້າງພັກ, ຫ້ອງການຄະນະພັກ ໄດ້ເອົາໃຈໃສ່ຕໍ່ໜ້າທີ່ຮັບຜິດຊອບ, ຍົກສູງຄຸນນະພາບໃນການເປັນເສນາທິການ, ເປັນເຈົ້າການຜັນຂະຫຍາຍບັນດາໜ້າທີ່ຈຸດສຸມຢ່າງທັນການ, ແກ້ໄຂບັນດາໜ້າທີ່ເລັ່ງດ່ວນໄດ້ເປັນຢ່າງດີ, ໂດຍສະເພາະແມ່ນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XIII ຂອງພັກ, 10 ແຜນງານໃຫຍ່ຂອງຄະນະພັກນະຄອນ, ບັນດາເນື້ອໃນຈຸດສຸມດ້ານວຽກງານໂຄສະນາສຶກສາ, ວຽກງານກໍ່ສ້າງພັກ, ກວດກາ, ຕິດຕາມ, ຂົນ ຂວາຍ, ກິດຈະການພາຍໃນ ສືບຕໍ່ໄດ້ຮັບການຜັນຂະຫຍາຍຄົບຊຸດ ແລະ ເປັນປະຈຳ, ຍາດໄດ້ຜົນສຳເລັດຮອບດ້ານ. ສະຫາຍ ດິງຕຽນຢຸ້ງ ໄດ້ສະເໜີທິດທາງ ໃນການສືບຕໍ່ປ່ຽນແປງໃໝ່ດ້ານເນື້ອໃນ ແລະ ຍົກສູງນຳໃຈສູ້ຊົນໃນວຽກງານສຶກສາການເມືອງແນວຄິດ, ກຳໄດ້ສະພາບການທັນປ່ຽນຢ່າງທັນການ ທີ່ອາດກະທົບເຖິງແນວຄິດຂອງພະນັກງານ, ສະມາຊິກພັກ ແລະ ປະຊາຊົນນະຄອນຫລວງຮ່າໂນ້ຍ, ເອົາໃຈໃສ່ຍົກສູງກຳລັງຄວາມສາມາດໃນການນຳພາ, ກຳລັງແຮງສູ້ຊົນຂອງຄະນະໜ່ວຍພັກ, ເປັນຕົ້ນແມ່ນຂັ້ນຮາກຖານໃນການປະຕິບັດ ຕາມບົດສະຫຼຸບ ເລກທີ 21-KL/TW ຂອງຄະນະບໍລິຫານງານຊຸດທີ XIII.

ວັນທີ 16/1/2022, ໃນໂອກາດປີໃໝ່ປະຈຳຊາດ ສສ ຫວຽດນາມ (ເຕັດ) ການນຳພັກ, ລັດ, ນຳໂດຍ ສະຫາຍ ຫງວຽນຊວັນຟຸກ, ປະທານປະເທດ ສສ ຫວຽດນາມ ໄດ້ຢ້ຽມຢາມ ຄອບຄົວທີ່ທຸກຍາກ, ກຳມະກອນ, ຊາວຜູ້ອອກແຮງງານ ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກທາດພິດສີສົ້ມດີໂອຊິນ ໃນນະຄອນດານັງ. ສະຫາຍ ຫງວຽນຊວັນຟຸກ ເນັ້ນໜັກວ່າ ບຸນປີໃໝ່ປະຈຳຊາດ ແມ່ນວັດທະນະທຳທີ່ເປັນມູນເຊື້ອມາແຕ່ດົນນານ ແລະ ໄດ້ມອບຂອງຂວັນໃຫ້ຜູ້ທີ່ມີຄຸນງາມຄວາມດີຕໍ່ການປະຕິວັດ, ສະເໜີໃຫ້ການນຳນະຄອນດານັງ ສືບຕໍ່ມອບເຄື່ອງຊ່ວຍເຫຼືອໃຫ້ຄອບຄົວທີ່ທຸກຍາກ ເພື່ອຮັບປະກັນໃຫ້ປະຊາຊົນທຸກຄົນ ມີຊີວິດທີ່ດີ

ຂຶ້ນ, ຕ້ອນຮັບບຸນປີໃໝ່ດ້ວຍຄວາມປອດໄພ, ມ່ວນຊື່ນ ແລະ ພິເສດແມ່ນຕ້ອງເອົາໃຈໃສ່ເຖິງບັນດາມາດຕະການປ້ອງກັນ, ຕ້ານພະຍາດໂຄວິດ-19.

ວັນທີ 20/1/2022, ສະຫາຍ ຫງວຽນຟູຈ້ອງ, ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ, ຫົວໜ້າຄະນະຊີ້ນຳຂັ້ນສູນກາງໃນການສະກັດກັ້ນ ແລະ ການຕ້ານສໍ້ລາດບັງຫຼວງ, ປະກົດການຫຍໍ້ທໍ້ ໄດ້ຊີ້ນຳກອງປະຊຸມ ຄັ້ງທີ 21 ຂອງຄະນະຊີ້ນຳຂັ້ນສູນກາງໃນການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ປະກົດການຍໍ້ທໍ້ ໂດຍໄດ້ເນັ້ນໃຫ້ເອົາໃຈໃສ່ບາງບັນຫາ ແລະ ທົບທວນການເຄື່ອນໄຫວວຽກງານຂອງຄະນະໃນປີ 2021 ເປັນຕົ້ນແມ່ນ: 1) ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ 13 ເພື່ອສ້າງ ແລະ ປັບປຸງພັກ, ສ້າງທົ່ວລະບົບການເມືອງມີຄວາມປອດໃສ-ເຂັ້ມແຂງ; ຄຳສັ່ງຂອງກົມການເມືອງ ໃນວຽກງານການຮຽນຮູ້ ແລະ ຕາມແນວຄິດ, ຄຸນສົມບັດ, ການດຳລົງຊີວິດຂອງປະທານໂຮ່ຈິມິນ; 2) ການປະຕິບັດວຽກງານຂອງຄະນະມີປະສິດຕິຜົນ, ຮອບດ້ານ ແລະ ມີຄວາມເປັນເອກະພາບພ້ອມພຽງກັນເປັນລະບົບໃນການກວດກາ, ຊີ້ນຳ ແລະ ການລົງວິໄນຜູ້ທີ່ລະເມີດຕ່າງໆ ເຊິ່ງໃນປີທີ່ຜ່ານມາ, ມີພະນັກງານຄຸ້ມຄອງຂັ້ນສູງກາງຖືກວິໄນຈຳນວນ 32 ສະຫາຍ ປະກອບດ້ວຍ ອະດີດກຳມະການສູນກາງພັກ, ອະດີດລັດຖະມົນຕີ 2 ສະຫາຍ, ເລຂາພັກແຂວງ 1 ສະຫາຍ, ຂັ້ນຮອງລັດຖະມົນຕີ (ທັງປະຈຸບັນ ແລະ ອະດີດ) 5 ສະຫາຍ, ອະດີດປະທານກຳມະການປະຊາຊົນແຂວງ, ນະຄອນ 2 ສະຫາຍ, ອະດີດຮອງເລຂາຄະນະພັກແຂວງ, ນະຄອນ 3 ສະຫາຍ ແລະ ນາຍທະຫານຂັ້ນນາຍພົນອີກ 13 ສະຫາຍ; 3) ການຍຶດຊັບສິນຄືນຈາກການສໍ້ລາດບັງຫຼວງ ໃນປີ 2021 ໄດ້ຫຼາຍກ່ວາ 900 ຕື້ດົ່ງ (ປະມານ 400 ລ້ານໂດລາສະຫະລັດ); 4) ວຽກງານສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ພາຍໃນບັນດາອົງການໄດ້ຮັບການຊຸກຍູ້ຂຶ້ນກ່ວາເກົ່າ; 5) ການກວດພົບ ແລະ ການແກ້ໄຂບັນດາການສໍ້ລາດບັງຫຼວງ ຢູ່ບັນດາທ້ອງຖິ່ນມີບົດບາດກ້າວໄປໃນທິດທາງທີ່ດີຂຶ້ນ.

**2) ພັກກອມມູນິດຈີນ**

ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປ ຈີນ ໄດ້ແລກປ່ຽນສານຊົມເຊີຍ ແລະ ອວຍພອນຜູ້ນຳຕ່າງປະເທດ ເຊັ່ນ: ວັນທີ 06/01/2022, ກັບປະທານາທິບໍດີ ຕັວກເມນິດສະຖານ, ໃນໂອກາດວັນສ້າງຕັ້ງສາຍພົວພັນທາງການທູດລະຫວ່າງ ສປ ຈີນ ຕັວກເມນິດສະຖານ ຄົບຮອບ 30 ປີ; ວັນທີ 10/01/2022, ກັບປະທານາທິບໍດີເບລາຣຸດຊີ, ໃນໂອກາດວັນສ້າງຕັ້ງສາຍພົວພັນທາງການທູດ ສປ ຈີນ - ເບລາຣຸດຊີ ຄົບຮອບ 30 ປີ. ການສະເຫຼີມວັນຄົບຮອບສາຍພົວພັນການທູດດັ່ງກ່າວ, ເຮັດໃຫ້ສອງຝ່າຍ ໄດ້ກາຍເປັນຄູ່ຮ່ວມມືຍຸດທະສາດຮອບດ້ານທີ່ມີຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ, ການຮ່ວມມືໃນການກໍ່ສ້າງໂຄງການ "ໜຶ່ງແລວ ໜຶ່ງເສັ້ນທາງ" ແລະ ໂຄງການທີ່ສຳຄັນອື່ນໆ ມີຄວາມກ້າວໜ້າຢ່າງບໍ່ຢຸດຢັ້ງ, ມູນຄ່າການຄ້າສອງຝ່າຍໄດ້ເພີ່ມຂຶ້ນ 50 ເທົ່າໃນ 30 ປີຜ່ານມາ; ວັນທີ 11/01/2022, ສົນທະນາຜ່ານທາງໂທລະສັບກັບ ທ່ານ ປະທານາທິບໍດີໂປໂລຍ ສະແດງຄວາມເຫັນໃຈທີ່ ທ່ານຕິດເຊື້ອໂຄວິດ-19 ສາຍພັນໃໝ່ ແລະ ອວຍພອນໃຫ້ທ່ານຫາຍດີໂດຍໄວ, ອວຍພອນໃຫ້ປະຊາຊົນໂປໂລຍ ໄດ້ຮັບໄຊຊະນະຈາກໂລກລະບາດໂດຍໄວ. ສປ ຈີນ ຖືສຳຄັນການພັດທະນາການພົວພັນຈີນ-ໂປໂລຍ, ຍິນດີຮ່ວມກັບໂປໂລຍ ເພື່ອຊຸກຍູ້ການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານຈີນ-ໂປໂລຍ ຂຶ້ນສູ່ລະດັບໃໝ່.

ວັນທີ 18 – 20/01/2022, ກອງປະຊຸມຄົບຄະນະຄັ້ງທີ 6 ຂອງຄະນະກຳມະການກວດກາວິໄນສູນກາງພັກກອມມູນິດຈີນ ສະໄໝທີ 19 ໄດ້ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງ, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ ໄດ້ກ່າວຄຳປາໄສທີ່ສຳຄັນ ແລະ ໄດ້ວາງແຜນຍຸດທະສາດເພື່ອຊຸກຍູ້ການຄຸ້ມຄອງພັກຢ່າງເຂັ້ມງວດຮອບດ້ານໃຫ້ກ້າວເຂົ້າສູ່ລວງເລິກ. ພ້ອມກັນນັ້ນ, ສະຫາຍ ສີ ຈິ້ນຜິງ ຍັງໄດ້ສະຫຼຸບເຄັດລັບຂອງພັກກອມມູນິດຈີນທີ່ສາມາດຮັກສາຄວາມມີຊີວິດຊີວາໃນຮ້ອຍປີຜ່ານມາດັ່ງນີ້: ໃນ 100 ປີຜ່ານມາ, ຢູ່ນອກພັກ ແມ່ນອາໄສການພັດທະນາປະຊາທິປະໄຕປະຊາຊົນ, ຮັບເອົາການຕິດຕາມກວດກາຂອງປະຊາຊົນ ; ຢູ່ພາຍໃນພັກ ຕ້ອງໄດ້ອາໄສການຄຸ້ມຄອງພັກຢ່າງເຂັ້ມງວດຮອບດ້ານ ແລະ ຊຸກຍູ້ການປະຕິວັດຕົນເອງ, ຍຶດໝັ້ນສັດຈະທຳ ແລະ ດັດແກ້ຄວາມຜິດພາດຢ່າງກ້າຫານ, ປະຕິວັດຕົນເອງຢ່າງກ້າຫານ, ຈຶ່ງຈະສາມາດຮັບປະກັນໄດ້ຄວາມມີຊີວິດຊີວາຂອງພັກກອມມູນິດຈີນຢ່າງຕໍ່ເນື່ອງ ແລະ ພັດທະນາເຂັ້ມແຂງຂຶ້ນຢ່າງບໍ່ຢຸດຢັ້ງ, ການຄຸ້ມຄອງພັກຢ່າງເຂັ້ມງວດຮອບດ້ານ ແມ່ນພຶດຕິກຳອັນຍິ່ງໃຫຍ່ຂອງການປະຕິວັດຕົນເອງໃນຍຸກໃໝ່, ຕ້ອງຍຶດໝັ້ນເອົາການກໍ່ສ້າງພັກທາງດ້ານການເມືອງ ເປັນສິ່ງນຳພາ, ຍຶດໝັ້ນທິດທາງພື້ນຖານທາງການເມືອງໃນການປະຕິວັດຕົນເອງ, ຕ້ອງຍຶດໝັ້ນເອົາການກໍ່ສ້າງພັກດ້ານແນວຄິດ

ເປັນການກໍ່ສ້າງພັກຂັ້ນພື້ນຖານ, ຝຶກຝົນຫຼໍ່ຫຼອມອາວຸດດ້ານແນວຄິດທີ່ແຫຼມຄົມໃນການປະຕິວັດຕົນເອງ, ຕ້ອງຈັດຕັ້ງປະຕິບັດກົດເຫຼັກ 8 ຂໍ້ຂອງສູນກາງພັກຢ່າງເດັດດ່ຽວ, ປັບປຸງແບບແຜນດ້ວຍລະບຽບວິໄນຢ່າງເຂັ້ມງວດ, ເປີດຊ່ອງທາງທີ່ມີປະສິດທິຜົນໃນການປະຕິວັດຕົນເອງໃຫ້ອຸດົມສົມບູນຂຶ້ນ, ຕ້ອງຍຶດໝັ້ນການຕໍ່ຕ້ານການສໍ້ລາດບັງຫຼວງຢ່າງເຂັ້ມແຂງ ແລະ ຮີບດ່ວນປາບສາຍຟ້າແມບ, ດຳເນີນບັ້ນບຸກທະລຸ ແລະ ບັ້ນໄລຍະຍາວໃນການປະຕິວັດຕົນເອງໃຫ້ດີ, ຕ້ອງຍຶດໝັ້ນເພີ່ມທະວີບົດບາດທາງການເມືອງ ຄວາມສາມາດດ້ານການຈັດຕັ້ງ ແລະ ແຮງຈູງໃຈຂອງອົງການພັກ, ບຳລຸງສ້າງຖັນແຖວພະນັກງານທີ່ກ້າຕໍ່ສູ້ ກ້າປະຕິວັດຕົນເອງ, ຕ້ອງຍຶດໝັ້ນການສ້າງລະບົບລະບຽບການທີ່ລ້າງສ່ວຍຕົນເອງ ບູລະນະຕົນເອງ ປະຕິຮູບຕົນເອງ ແລະ ຍົກລະດັບຕົນເອງ ເພື່ອເປັນການຮັບປະກັນດ້ານລະບຽບການໃຫ້ແກ່ການຊຸກຍູ້ການປະຕິວັດຕົນເອງທີ່ຍິ່ງໃຫຍ່.

**3). ພັກແຮງງານເກົາຫຼີ**

ວັນທີ 19/1/2022, ກອງປະຊຸມກົມການເມືອງສູນກາງພັກແຮງງານເກົາຫຼີ ຄັ້ງທີ 6 ສະໄໝທີ 8 ໄດ້ໄຂຂຶ້ນຢ່າງເປັນທາງການ ທີ່ນະຄອນຫຼວງພຽງຢາງ ພາຍໃຕ້ການເປັນປະທານຂອງ ສະຫາຍ ກິມເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ. ກອງປະຊຸມໄດ້ປຶກສາຫາລື ແລະ ຕົກລົງບັນຫາທີ່ສຳຄັນຂອງ ພັກ ແລະ ລັດຖະບານ ສປປ ເກົາຫຼີ ເປັນຕົ້ນແມ່ນ ການຈັດພິທີສະເຫຼີມສະຫຼອງວັນຄ້າຍວັນເກີດຂອງ ສະຫາຍ ກິມອິນຊຸງ ຄົບຮອບ 110 ປີ ແລະ ສະຫາຍກິມເຈິງອິນ ຄົບຮອບ 80 ປີ ໃຫ້ເປັນບຸນມະໂຫລານໃຫຍ່ຂອງຊາດ. ພ້ອມກັນນັ້ນ, ກອງປະຊຸມຍັງໄດ້ວິເຄາະສະຖານະການຢູ່ແຫຼມເກົາຫຼີ ແລະ ບັນຫາສາກົນຕ່າງໆ ແລະ ໄດ້ວາງນະໂຍບາຍໃໝ່ ເພື່ອຮັບມືກັບນະໂຍບາຍປໍລະປັກຂອງ ອາເມລິກາ; ກົມການເມືອງສູນກາງພັກແຮງງານເກົາຫຼີ ໄດ້ມີຄຳສັ່ງໃຫ້ກຳລັງປະກອບອາວຸດເລີ່ມຕົ້ນປະຕິບັດໂຄງການນິວເຄລຍ ຄືນໃໝ່ ທີ່ມີການຢຸດຕິຊົ່ວຄາວໃນໄລຍະຜ່ານມາ.

**4). ພັກກອມມູນິດກູບາ**

ວັນທີ 10/1/ 2022, ທ່ານ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ແຫ່ງ ສ.ກູບາ ໄດ້ເດີນທາງຢ້ຽມຢາມນິກາຣາກົວ ເພື່ອເຂົ້າຮ່ວມພິທີສາບານຕົນເຂົ້າຮັບຕຳແໜ່ງປະທານາທິບໍດີ ນິກາຣາກົວ ຂອງ ທ່ານ Daniel Ortega Saavedra. ທ່ານ Miguel ໄດ້ສະແດງຄວາມຊົມເຊີຍຕໍ່ໄຊຊະນະອັນໃຫຍ່ຫຼວງຂອງປະຊາຊົນນິກາຣາກົວ, ເຊິ່ງມັນບໍ່ພຽງແຕ່ເປັນໄຊຊະນະຂອງນິກາຣາກົວ, ແຕ່ຍັງເປັນໄຊຊະນະຂອງຂະບວນການຝ່າຍຊ້າຍ ແລະ ຂະບວນການກ້າວໜ້າໃນອາເມລິກາລາຕິນ ແລະ ກາລີບຽນ; ສະແດງໃຫ້ເຫັນການຕໍ່ສູ້ຕ້ານຈັກກະພັດນິຍົມ ແລະ ການຕັດສິນໃຈຂອງປະຊາຊົນນິກາຣາກົວ ຕໍ່ການປະຕິຮູບທາງການເມືອງ, ເສດຖະກິດ ແລະ ຄວາມເປັນເອກະພາບແຫ່ງຊາດ ພາຍໃຕ້ການນຳພາຂອງປະທານາທິບໍດີ Daniel Ortega.

**3. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ**

ຕົວເລກຜູ້ຕິດເຊື້ອໂຄວິດ-19 ໃນທົ່ວໂລກ ຍັງສືບຕໍ່ເພີ່ມຂຶ້ນ ໂດຍສະເພາະຈາກສາຍພັນ Omicron ແລະສາຍພັນ Delta; ຂົງເຂດເອີລົບ ເປັນເຂດທີ່ມີການລະບາດຫຼາຍທີ່ສຸດ ເຊັ່ນ: ໃນປະເທດອາເມລິກາ, ເຢຍລະມັນ, ອັງກິດ, ລັດເຊຍ, ແອັດສະປາຍ, ອີຕາລີ; ຂົງເຂດອາຊີ ໃນສະພາບການລະບາດດັ່ງກ່າວ, ຫຼາຍປະເທດ ໄດ້ຕັດສິນໃຈຍົກເລີກການເຄື່ອນໄຫວ ເຊັ່ນ : ຈຳກັດການສະເຫຼີມສະຫຼອງຕ້ອນຮັບປີໃໝ່ 2022, ກັບມາໃຊ້ມາດຕະການໄລຍະຫ່າງທາງສັງຄົມ ເພື່ອຫຼຸດຜ່ອນການແຜ່ຂະຫຍາຍຂອງພະຍາດດັ່ງກ່າວ ເຊັ່ນ: ສ.ເກົາຫຼີ ໄດ້ຫ້າມການຊຸມນຸມ ເກີນ 4 ຄົນ, ຮ້ານອາຫານຕ່າງໆ ຕ້ອງປິດ ໃນເວລາ 21:00 ໂມງ. ສຳລັບປະເທດອາຊຽນ ແມ່ນ ປະເທດໄທ, ມາເລເຊຍ, ຟີລິບປິນ, ຫວຽດນາມ ມີການລະບາດຫຼາຍກວ່າໝູ່. ເພື່ອປ້ອງກັນການລະບາດຂອງສາຍພັນ Omicron, ບາງປະເທດໄດ້ສັກວັກແຊງເຂັມທີ່ 4 ໃຫ້ປະຊາຊົນ ເຊັ່ນ: ປະເທດຈິເລ; ອາເມລິກາ ໄດ້ເລີ່ມສັກວັກແຊງ Pfizer ໃຫ້ກຸ່ມຄົນອາຍຸ 12 ຫາ 15 ປີ. ພ້ອມກັນນັ້ນ, ອົງການອະນາໄມໂລກ WHO ໄດ້ກ່າວວ່າ ສາຍພັນ Omicron ມີຄວາມອັນຕະລາຍຕໍ່ຜູ້ທີ່ບໍ່ໄດ້ຮັບວັກແຊງ; ຄຽງຄູ່ກັນນັ້ນ ສອງບໍລິສັດການຢາ Pfizer ຂອງອາເມລິກາ ແລະ ບໍລິສັດ BioNTech ຂອງ

ເຢຍລະມັນ ໄດ້ປະກາດເລີ່ມຕົ້ນການທົດລອງທາງດ້ານຄລີນິກຂອງວັກແຊງສະເພາະຕ້ານສາຍພັນ Omicron ສຳລັບຜູ້ໃຫຍ່ທີ່ມີອາຍຸເຖິງ 55 ປີ ເພື່ອປະເມີນລະດັບຄວາມປອດໄພຂອງເຊື້ອໄວຣັສ ແລະ ການຕອບໂຕ້ຂອງພູມຕ້ານທານ. ຮອດວັນທີ 31 ມັງກອນ 2022, ຜູ້ຕິດເຊື້ອໂຄວິດ-19 ໃນທົ່ວໂລກ ມີ 375,027,140 ຄົນ, ເສຍຊີວິດ 5,681,014 ຄົນ ປິ່ນປົວຫາຍດີ 296,244,172 ຄົນ.

**2) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ**

- ວັນທີ 7-8 ມັງກອນ 2022, ສົມເດັດຮຸນເຊັນ, ນາຍົກລັດຖະມົນຕີກໍາປູເຈຍ ໄດ້ເດີນທາງຢ້ຽມຢາມມຽນມາ ຕາມການເຊີນຂອງ ນາຍພົນ ມິນ ອອງ ລາຍ, ຜູ້ນໍາມຽນມາ, ເປັນການຢ້ຽມຢາມໃນນາມກໍາປູເຈຍ ເປັນປະທານອາຊຽນ ໃນປີ 2022 ແລະ ເປັນຜູ້ນໍາຕ່າງປະເທດຄົນທໍາອິດ ທີ່ເດີນທາງຢ້ຽມຢາມມຽນມາ ຕັ້ງແຕ່ມີການລັດຖະປະຫານ ໃນວັນທີ 1 ກຸມພາ 2021 ເປັນຕົ້ນມາ. ນາຍພົນ ມິນອອງລາຍ, ຜູ້ນໍາມຽນມາ ໄດ້ຕ້ອນຮັບ ສົມເດັດ ຮຸນເຊັນ ດ້ວຍບັນຍາກາດດີ ແລະ ຍິນດີໃຫ້ ສົມເດັດ ຮຸນເຊັນ ເປັນອ້າຍຮັກ, ເຊິ່ງສະແດງເຖິງຄວາມເປັນມິດທີ່ດີລະຫວ່າງຜູ້ນໍາສອງປະເທດ. ຜູ້ນໍາທັງສອງ ໄດ້ປຶກສາຫາລືວິທີແກ້ໄຂຄວາມບໍ່ສະຫງົບໃນມຽນມາ ໂດຍໄດ້ອອກຖະແຫຼງການຮ່ວມກັນ ຄື: 1. ໃຫ້ທູດພິເສດຂອງອາຊຽນ ໃນປີ 2022, ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີຕ່າງປະເທດຂອງກໍາປູເຈຍ ເຂົ້າໄປໃນມຽນມາ ເພື່ອພົບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນມຽນມາ ລວມທັງບັນດາກຸ່ມຕິດອາວຸດຕ່າງໆ; 2. ພົນເອກ ມິນ ອອງ ລາຍ ຈະຂະຫຍາຍເວລາການຢຸດຍິງທົ່ວປະເທດ ໄປຈົນຮອດທ້າຍປີ 2022, ເຊິ່ງກ່ອນໜ້ານີ້ ໄດ້ປະກາດຢຸດຍິງທົ່ວປະເທດ ພຽງ 5 ເດືອນ ເຖິງເດືອນ ກຸມພາ 2022 ເທົ່ານັ້ນ; 3. ນາຍົກລັດຖະມົນຕີ ຮຸນເຊັນ ສະໜັບສະໜູນນະໂຍບາຍຂອງລັດຖະບານມຽນມາ ທີ່ຈະນໍາປະເທດໄປສູ່ການປອງດອງແຫ່ງຊາດ, ສັນຕິພາບທີ່ຍືນຍົງ ເພື່ອການພັດທະນາປະເທດໃຫ້ຮຸ່ງເຮືອງໃນອະນາຄົດ. ນາຍົກ ຮຸນເຊັນ ກ່າວຕື່ມວ່າ ບົດຮຽນ ແລະ ປະສົບການຂອງກໍາປູເຈຍ ໄດ້ໃຫ້ຮູ້ວ່າ ການຈະກ້າວເຂົ້າສູ່ຂະບວນການສັນຕິພາບທີ່ສົມບູນແບບ ແລະ ຄວາມເປັນເອກະພາບແຫ່ງຊາດນັ້ນ ຈະບໍ່ສາມາດເກີດຂຶ້ນໄດ້ ຖ້າຫາກບໍ່ມີການຮ່ວມມື ແລະ ຄວາມເຫັນພ້ອມຈາກທຸກພາກສ່ວນທີ່ກ່ຽວຂ້ອງ; ກໍາປູເຈຍ ຈະຊຸກຍູ້ໃຫ້ ທູດພິເສດອາຊຽນ ໄດ້ໄປພົບກັບທຸກຝ່າຍໃນມຽນມາ ແຕ່ກໍຕ້ອງຢູ່ບົນພື້ນຖານສະຖານະການໃນມຽນມາ; 4. ຜູ້ນໍາທັງສອງຕົກລົງເຫັນດີ ຈະຈັດໃຫ້ມີການປະຊຸມຜູ້ທີ່ກ່ຽວຂ້ອງກັບສະຖານະການມຽນມາ ເຊັ່ນ: ທູດພິເສດຂອງອາຊຽນ, ເລຂາທິການໃຫຍ່ອາຊຽນ, ຕົວແທນຂອງສູນໃຫ້ຄວາມຊ່ວຍເຫຼືອມະນຸດສະທໍາ ແລະ ການບໍລິຫານໄພພິບັດຂອງອາຊຽນ ຫຼື ASA center, ບັນດາຕົວແທນຈາກຄະນະເຮັດວຽກພິເສດລະດັບຊາດຂອງມຽນມາ ທີ່ຈະອໍານວຍຄວາມສະດວກໃຫ້ກັບ ASA center, ໜ່ວຍງານທີ່ເປັນເຄືອຂ່າຍຂອງສະຫະປະຊາຊາດເຂົ້າຮ່ວມ ເພື່ອປຶກສາຫາລືອໍານວຍຄວາມສະດວກ ຊ່ວຍເຫຼືອດ້ານມະນຸດສະທໍາເຂົ້າໄປມຽນມາ ໂດຍສະເພາະແມ່ນດ້ານການຮັບມືກັບສະຖານະການແຜ່ລະບາດຂອງພະຍາດໂຄວິດ-19. ພ້ອມກັນນັ້ນ, ນາຍົກກໍາປູເຈຍ ໄດ້ມອບອຸປະກອນທາງການແພດຕ້ານພະຍາດໂຄວິດ-19 ຈໍານວນໜຶ່ງ ໃຫ້ແກ່ລັດຖະບານມຽນມາ.

**3) ສະພາບການ ໃນຂົງເຂດເອີລົບ-ອາເມລິກາ**

- ວັນທີ 2 – 11 ມັງກອນ 2022, ປະຊາຊົນກາຊັກສະຖານຫຼາຍພັນຄົນ ໄດ້ອອກມາເດີນຂະບວນປະທ້ວງ ເພື່ອຂັບໄລ່ລັດຖະບານ ໂດຍອ້າງບັນຫາເສດຖະກິດບໍ່ໄດ້ຮັບການພັດທະນາ, ຂຶ້ນລາຄານໍ້າມັນ ແລະ ອື່ນໆ, ເຊິ່ງກຸ່ມຜູ້ປະທ້ວງໄດ້ສ້າງຄວາມວຸ້ນວາຍ, ທໍາລາຍຊັບສິນຂອງຊາດ. ເພື່ອຄວາມສະຫງົບພາຍໃນປະເທດ, ປະທານາທິບໍດີກາຊັກສະຖານ ທ່ານ Kassym Jomrt Tokayev, ໄດ້ປະກາດພາວະສຸກເສີນ ພ້ອມທັງຂໍຄວາມຊ່ວຍເຫຼືອຈາກອົງການຄວາມໝັ້ນຄົງຮ່ວມ (The Collective Security Treaty Organization – CSTO) ທີ່ເປັນພັນທະມິດທາງທະຫານ ປະກອບມີ 06 ປະເທດຄື: ລັດເຊຍ, ອາກເມນີ, ເບລຣຸດຊີ, ກາຊັກສະຖານ, ກຽກກິດສະຖານ ແລະ ຕາຈິກິດສະຖານ ເຂົ້າມາຊ່ວຍເຫຼືອ ແລະ ສາມາດຄວບຄຸມສະຖານນະການໄວ້ໄດ້. ພ້ອມກັນນັ້ນ ເພື່ອຄວາມສະຫງົບຂອງຊາດ, ປະທານາທິບໍດີ ກາຊັກສະຖານ ໄດ້ສັ່ງປົດຕໍາແໜ່ງເຈົ້າໜ້າທີ່ຄວາມໝັ້ນຄົງກາຊັກສະຖານ 2 ທ່ານ ແລະ ນາຍົກລັດຖະມົນຕີ ໄດ້ລາອອກ; ປະກາດແຕ່ງຕັ້ງທ່ານ Alikhan Smailov, ຮອງນາຍົກລັດຖະມົນຕີ ຂຶ້ນເປັນນາຍົກລັດຖະມົນຕີ. ເຫດການປະທ້ວງ-ກໍ່ຄວາມວຸ້ນວາຍຄັ້ງນີ້ ເຮັດໃຫ້ປະຊາຊົນມີການສູນເສຍຊີວິດ 160 ຄົນ, ຖືກຈັບກຸມ 8,000 ຄົນ. ທ່ານ ຫວັງອີ້, ລັດຖະມົນຕີຕ່າງປະເທດ ຈີນ ມີຄໍາເຫັນຜ່ານທາງໂທລະສັບ ກັບ ທ່ານ Sergei

Lavrov, ລັດຖະມົນຕີຕ່າງປະເທດ ລັດເຊຍ ວ່າ ສປ ຈີນ ສະໜັບສະໜູນ ອົງການຮ່ວມມືດ້ານຄວາມໝັ້ນຄົງ CSTO ໃນການເຂົ້າໄປຊ່ວຍແກ້ໄຂສະຖານະການທີ່ເກີດຂຶ້ນ ເພື່ອຟື້ນຟູສະຖຽນລະພາບ ແລະ ຄວາມໝັ້ນຄົງ ຂອງ ກາຊັກສະຖານ, ປ້ອງກັນບໍ່ໃຫ້ເກີດສົງຄາມໃນອາຊີກາງ. ຈີນ ຂັດຄ້ານການກະທຳທີ່ພະຍາຍາມຕໍ່ຕ້ານ ແລະ ແຊກແຊງຈາກພາຍນອກ, ຕ້ານການສົ່ງເສີມການປະຕິວັດສີ. ສ່ວນລັດຖະມົນຕີຕ່າງປະເທດ ອາເມລິກາ ມີຄຳເຫັນຕ້ານກ່ຽວກັບອົງການສາກົນພາຍນອກເຂົ້າໄປຊ່ວຍເຫລືອ ກາຊັກສະຖານ, ພ້ອມທັງເຕືອນວ່າ ຖ້າປ່ອຍໃຫ້ລັດເຊຍເຂົ້າມາແບບງ່າຍໆ ຈະເຮັດໃຫ້ພວກເຂົາບໍ່ຢາກຖອນທະຫານກັບຄືນ ແລະ ຢືນຢັນວ່າ ອາເມລິກາ ບໍ່ມີສ່ວນກ່ຽວຂ້ອງກັບເຫດການໃນ ກາຊັກສະຖານ.

- ວັນທີ 10 – 13/1/2022, ໄດ້ມີການພົບປະ ລະຫວ່າງ ລັດເຊຍ - ອາເມລິກາ ແລະ NATO ທີ່ ເຊີແນວ ແລະ ວຽນນາ, ເຊິ່ງຝ່າຍລັດເຊຍ ນຳໂດຍ ທ່ານ Sergey Ryabkov, ຮອງລັດຖະມົນຕີການຕ່າງປະເທດ, ທ່ານ ພັອ. Alexander Fomin, ຮອງລັດຖະມົນຕີກະຊວງປ້ອງກັນປະທດ ແລະ ທ່ານ Alexander Grushko, ຮອງລັດຖະມົນຕີກະຊວງຕ່າງປະເທດ; ຝ່າຍອາເມລິກາ ນຳໂດຍ ທ່ານ ນາງ Wendy Sherman, ຮອງລັດຖະມົນຕີການຕ່າງປະເທດ ແລະ ຝ່າຍນາໂຕ ນຳໂດຍ ທ່ານ Jens Stoltenberg, ເລຂາທິການໃຫຍ່ NATO. ການພົບປະດັ່ງກ່າວໄດ້ປຶກສາຫາລືຫຼາຍບັນຫາສຳຄັນ ເປັນຕົ້ນ ຂໍ້ສະເໜີ ທີ່ ລັດເຊຍ ສົ່ງໄປຍັງ ອາເມລິກາ ໃນເດືອນ ທັນວາ 2021 ຮຽກຮ້ອງໃຫ້ NATO ບໍ່ຂະຫຍາຍສະມາຊິກໄປຍັງບັນດາປະເທດເອີລົບຕາເວັນອອກຕື່ມອີກ, ໂດຍສະເພາະແມ່ນບໍ່ໃຫ້ຮັບເອົາອູແກຣນ ເປັນສະມາຊິກ ແລະ ບໍ່ເພີ່ມອາວຸດຍຸດໂທປະກອນ ເຂົ້າໃກ້ຊາຍແດນຂອງ ລັດເຊຍ; ຜ່ານການເຈລະຈາຫຼາຍຄັ້ງ, ສອງຝ່າຍບໍ່ສາມາຕົກລົງກັນໄດ້, ອາເມລິກາ ແລະ NATO ບໍ່ໃຫ້ຄຳຕອບການສະເໜີ ຂອງລັດເຊຍ, ຍັງຢືນຢັນຈະໃຊ້ມາດຕະການລົງໂທດລັດເຊຍ ຖ້າ ລັດເຊຍ ຮຸກຮານ ອູແກຣນ. ທັງໝົດດັ່ງກ່າວ ເຮັດໃຫ້ການພົວພັນ ລະຫວ່າງ ລັດເຊຍ-ອາເມລິກາ-ນາໂຕ ທະວີຄວາມເຄັ່ງຕຶງ. ໃນທີ່ສຸດ ວັນທີ 21/2/2022, ປະທານາທິບໍດີລັດເຊຍ ປູຕິນ ໄດ້ລົງນາມຮັບຮອງ ສາທາລະນະລັດ ປະຊາຊົນ ດອນແນັດສ (Donetsk People's Republic) ແລະ ສາທາລະນະລັດ ປະຊາຊົນ ລູຮັ່ນ (Luhansk People's Republic) ເປັນລັດເອກະລາດ ແລະ ສົ່ງກຳລັງກອງທັບເຂົ້າຊ່ວຍປົກປັກຮັກສາຄວາມສະຫງົບສອງລັດດັ່ງກ່າວ.

- ພາຍໃນອາເມລິກາ: ວັນທີ 19/01/2022, ທ່ານ ໂຈ ໄບເດີນ, ປະທານາທິບໍດີອາເມລິກາ ໄດ້ມີຄຳເຫັນ ໃນກອງປະຊຸມການບໍລິຫານປະເທດຄົບຮອບ 01 ປີ ໂດຍສັງລວມມີ 05 ຂໍ້ ເຊັ່ນ: 1. ຈະແກ້ໄຂບັນຫາການແຜ່ລະບາດຂອງພະຍາດໂຄວິດ - 19 ໃນ ສ.ອາເມລິກາ; 2. ຢືນຢັນວ່າ ຈະດຳເນີນມາດຕະການລົງໂທດຕໍ່ ສ. ລັດເຊຍ ແບບບໍ່ເຄີຍມີມາກ່ອນ ຖ້າຫາກຮຸກຮານ ອູແກຣນ; 3. ຈະແກ້ໄຂບັນຫາ ກ່ຽວກັບການຮັບປະກັນສິດທິໃນການລົງຄະແນນສຽງເລືອກຕັ້ງ ຂອງ ຄົນຜິວສີ ແລະ ຄົນກຸ່ມນ້ອຍ ໃນ ສ.ອາເມລິກາ; 4. ຈະບໍ່ຍົກເລີກຄວາມພະຍາຍາມໃນການຟື້ນຟູຂໍ້ຕົກລົງ ນິວເຄຍ ອີຣານ ປີ 2015; ແລະ 5. ຈະສຸມໃສ່ວຽກງານພັດທະນາພື້ນຖານໂຄງລ່າງ ສ້າງ ອາເມລິກາ ຄືນໃໝ່ ແລະ ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ. ຂະນະດຽວກັນ, ເວບໄຊ CBS/ You Gov Poll News ໄດ້ເຜີຍແຜ່ຜົນການສຳຫຼວດຄວາມຄິດເຫັນຂອງປະຊາຊົນ ອາເມລິກາ ກ່ຽວກັບການບໍລິຫານປະເທດຂອງ ປະທານາທິບໍ ດີ ໂຈ ໄບເດີນ, ພົບວ່າ 50% ຂອງປະຊາຊົນອາເມລິກາ ສະແດງຄວາມກັງວົນຕໍ່ການບໍລິຫານປະເທດຂອງ ລັດຖະ ບານຊຸດປະຈຸບັນ, 58% ວ່າ ທ່ານ ໂຈ ໄບເດີນ ບໍ່ແກ້ໄຂບັນຫາເສດຖະກິດໃນປະເທດຢ່າງຈິງຈັງ, 65% ວ່າ ບໍ່ແກ້ໄຂບັນຫາເງິນເຟີ້ ໄດ້ຢ່າງເດັດຂາດ. 01 ປີ ຜ່ານມາ ທ່ານ ໂຈ ໄບເດີນ ໄດ້ປະເຊີນກັບວິກິດອັນໃຫຍ່ຫຼວງ ເຊັ່ນ: ບັນຫາຊາວອົບພະຍົບ, ບັນຫາເງິນເຟີ້ທີ່ບໍ່ເຄີຍມີມາໃນປະຫວັດສາດ, ການແຜ່ລະບາດຂອງພະຍາດໂຄວິດ-19 ພາຍໃນປະ ເທດ ແລະ ບັນຫາໄພວ່າງງານ.

**4) ສະພາບການໃນຂົງເຂດຕາເວັນອອກກາງ**

- Aljazeera ວັນທີ 24/1/2022; ສະພາບການໃນຕາເວັນອອກກາງຍັງສືບຕໍ່ມີການປະທະກັນ ລະຫວ່າງກຸ່ມຮູຕີ ໃນເຢເມນ ກັບ ອາຣັບບີ ຊາອຸດິດ ແລະ ເອເມຣັດ ອາຣັບ ໂດຍການໂຈມຕີທາງອາກາດໃສ່ສູນອົບພະຍົບ, ສູນສື່ສານໂທລະຄົມມະນາຄົມ ໃນເມືອງ Hodeidad ແລະ ເມືອງຊາດາ ປະເທດ ເຢເມນ ເຮັດໃຫ້ມີຜູ້ເສຍຊີວິດຫຼາຍກວ່າ 70 ຄົນ, ໄດ້ຮັບບາດເຈັບ 138 ຄົນ; ຕ່າງຝ່າຍຕ່າງຕອບໂຕ້ກັນ, ກຸ່ມຮູຕີ ໄດ້ຍິງຂີປະນາວຸດ 02 ລູກ ໂຈມຕີໃນເມືອງຫຼວງ ອາບູດາບີ ຂອງ ສະຫະນະຄອນ ເອເມຣັດ ອາຣັບ, ແຕ່ ເອເມຣັດ ອາຣັບ ສາມາດຍິງສະກັດໄດ້ ບໍ່ມີຄວາມເສຍ

ຫາຍ. ວັນທີ 17/01/2022, ກຸ່ມຮູຕີ ໄດ້ຍິງລູກສອນໄຟໃສ່ສາງເກັບນໍ້າມັນ 03 ແຫ່ງ ແລະ ສະໜາມບິນ ອາບູດາບີ ເມືອງຫຼວງ ຂອງ ສະຫະນະຄອນ ເອເມຣັດອາຣັບ ເຮັດໃຫ້ມີຜູ້ເສຍຊີວິດ 03 ຄົນ ແລະ ໄດ້ຮັບບາດເຈັບຈຳນວນໜຶ່ງ. ທ່ານ Anwar Gargash, ທີ່ປຶກສາຂອງປະທານາທິບໍດີ ເອເມຣັດອາຣັບ ໄດ້ປະນາມການໂຈມຕີ ຂອງກຸ່ມຮູຕີ ວ່າເປັນການກະທຳທີ່ໂຫດຮ້າຍ, ສິ່ງຜົນກະທົບຕໍ່ສະຖຽນລະພາບ ແລະ ຄວາມໝັ້ນຄົງໃນພາກພື້ນ. ອາເມລິກາ, ຝຣັ່ງ, ບາເຣນ ສປຊ ແລະ ປະເທດອື່ນໆ ໄດ້ປະນາມເຫດການດັ່ງກ່າວ ແລະ ຮຽກຮ້ອງໃຫ້ທຸກຝ່າຍໃຊ້ມາດຕະການສູງສຸດ ເພື່ອຢຸດຕິ ແລະ ປ້ອງກັນຄວາມຮຸນແຮງທີ່ຈະເກີດຂຶ້ນໃນອະນາຄົດ.

- ວັນທີ 20/01/2022, ທ່ານ Ebrahim Raisi, ປະທານາທິບໍດີ ອີຣານ ໄດ້ຢ້ຽມຢາມ ລັດເຊຍ ແລະ ພົບປະກັບທ່ານ Vladimir Putin, ປະທານາທິບໍດີ ລັດເຊຍ. ສອງຝ່າຍ ໄດ້ປຶກສາຫາລືກ່ຽວກັບການຮ່ວມມື ທາງດ້ານການເມືອງ-ຄວາມໝັ້ນຄົງ, ເສດຖະກິດ, ການຄ້າ, ການລົງທຶນ ແລະ ແຈ້ງຈຸດຢືນທີ່ຈະຜັນຂະຫຍາຍຂໍ້ຕົກລົງໂຄງການນິວເຄລຍຂອງອີຣານ (JCPOA), ພ້ອມທັງ ແລກປ່ຽນທັດສະນະຕ່າງໆ ກ່ຽວກັບການພົວພັນຮ່ວມມືທີ່ສອງປະເທດເປັນພາຄີ, ບັນຫາພາກພື້ນ ແລະ ສາກົນ ທີ່ສອງຝ່າຍສົນໃຈ ເປັນຕົ້ນ ບັນຫາການກໍ່ການຮ້າຍໃນຕາເວັນອອກກາງ. ພ້ອມກັນນັ້ນ, ທ່ານ Raisi ຍັງໄດ້ມອບເອກະສານ ກ່ຽວກັບການພົວພັນຮ່ວມມືຍຸດທະສາດໃນໄລຍະ 20 ປີຕໍ່ໜ້າໃຫ້ລັດຖະບານລັດເຊຍ ເພື່ອນຳໄປພິຈາລະນາ ແລະ ກຳນົດທິດທາງການຮ່ວມມືຍຸດທະສາດໃນໄລຍະຍາວ ລະຫວ່າງ ສອງປະເທດ.

ແຫຼ່ງຂ່າວອ້າງອີງ :Vietnam News, Vietnam- Express, VNS, Xinhua, CNA, Global Times, CRI, Khmer Times, Jakarta post, Aljazeera, RT, Kpl, Sputnik, Yonhap, AFP, NHK, Aljazeera, CGTN

# II. ການເຄື່ອນໄຫວວຽກງານ ຂອງການນຳ ພັກ ປປ ລາວ

## 1. ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ ສົ່ງໂທລະເລກອວຍພອນ ວັນສ້າງຕັ້ງພັກກອມມູນິດຫວຽດນາມ ຄົບຮອບ 92 ປີ

ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ ໄດ້ສົ່ງໂທລະເລກອວຍພອນ ເຖິງ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໃນໂອກາດ ວັນສ້າງຕັ້ງພັກກອມມູນິດຫວຽດນາມ ຄົບ ຮອບ 92 ປີ, ມີເນື້ອໃນດັ່ງນີ້:

ເນື່ອງໃນໂອກາດ ວັນສ້າງຕັ້ງ ພັກກອມມູນິດຫວຽດນາມ ທີ່ມີກຽດສະຫງ່າ ຄົບຮອບ 92 ປີ (03/02/1930-03/02/2022), ໃນນາມຄະນະບໍລິຫານສູນກາງພັກປະຊາຊົນ ປະຕິວັດລາວ ແລະ ສະມາຊິກພັກ ປະຊາຊົນ ປະຕິວັດລາວ ພ້ອມດ້ວຍ ປະຊາຊົນລາວບັນດາເຜົ່າ ໃນທົ່ວປະເທດ, ພວກຂ້າພະເຈົ້າ ຂໍສົ່ງຄຳອວຍພອນໄຊອັນປະເສີດ ແລະ ໄມຕີຈິດມິດຕະພາບ ຖານສະຫາຍອ້າຍນ້ອງ ອັນສະໜິດສະໜົມ ມາຍັງ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະມາຊິກພັກ ແລະ ປະຊາຊົນ ຫວຽດນາມ ອ້າຍນ້ອງທຸກຖ້ວນໜ້າ.

ການກຳເນີດເກີດຂຶ້ນຂອງ ພັກກອມມູນິດ ຫວຽດນາມ ໂດຍແມ່ນປະທານ ໂຮ່ຈີມິນ ຜູ້ຍິ່ງໃຫຍ່ເປັນຜູ້ສ້າງຕັ້ງແມ່ນບາດລ້ຽວປະຫວັດສາດ ທີ່ສຳຄັນຂອງການປະຕິວັດ ຫວຽດນາມ. ນັບແຕ່ມື້ສ້າງຕັ້ງເປັນຕົ້ນມາ, ພັກກອມມູນິດຫວຽດນາມ ໄດ້ຈັດຕັ້ງນຳພາ ພາລະກິດປະຕິວັດ ຢ່າງອົງອາດກ້າແກ່ນ ແລະ ປະດິດສ້າງ ດ້ວຍການວາງແນວທາງທີ່ຖືກຕ້ອງສະຫຼາດສ່ອງໃສ ແລະ ໄດ້ນຳພາ ປະຊາຊົນ ຫວຽດນາມ ວິລະຊົນຍາດໄດ້ໄຊຊະນະອັນເປັນປະຫວັດການໃນການຕໍ່ສູ້ປົດປ່ອຍຊາດ, ທ້ອນໂຮມປະເທດຊາດ ຢ່າງສົມບູນໃນປີ 1975 ແລະ ມາໃນໄລຍະໃໝ່ ພັກກອມມູນິດຫວຽດນາມ ໄດ້ສືບຕໍ່ນຳພາ ໃນພາລະກິດສ້າງສາ ແລະ ປົກປັກຮັກສາ ປະເທດຊາດ ຫວຽດນາມ ຕາມທິດສັງຄົມນິຍົມ, ໂດຍສະເພາະແມ່ນໃນໄລຍະ 35 ປີ ແຫ່ງການປະຕິບັດແນວທາງການປ່ຽນແປງໃໝ່ທີ່ ພັກກອມມູນິດຫວຽດນາມ ໄດ້ເປັນຜູ້ລິເລີ່ມ ແລະ ນຳພາມານັ້ນ ໄດ້ເຮັດໃຫ້ປະເທດຊາດ ຫວຽດນາມ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດມີການພັດທະນາດ້ວຍຈັງຫວະສູງຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ໄດ້ຮັບການຍົກສູງຂຶ້ນຢ່າງເດັ່ນຊັດ; ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ, ການພົວພັນຕ່າງປະເທດ ໄດ້ຮັບການເປີດກວ້າງ, ບົດບາດ ແລະ ອິດທິພົນຂອງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ນັບມື້ນັບພົ້ນເດັ່ນ ແລະ ສູງຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ພັກປະຊາຊົນ ປະຕິວັດລາວ ແລະ ປະຊາຊົນລາວ ບັນດາເຜົ່າ ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ຜົນສຳເລັດ ແລະ ໄຊຊະນະອັນໃຫຍ່ຫຼວງຮອບດ້ານ ທີ່ ພັກກອມມູນິດຫວຽດນາມ ແລະ ປະຊາຊົນຫວຽດນາມອ້າຍນ້ອງຍາດມາໄດ້ ຕະຫຼອດໄລຍະ 92 ປີ ທີ່ຜ່ານມາ. ພວກຂ້າພະເຈົ້າ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສ ຂອງພັກກອມມູນິດຫວຽດນາມ ອັນມີ ສະຫາຍເລຂາທິການໃຫຍ່ ຫງວຽນຝູ້ຈ້ອງ ເປັນຜູ້ນຳໜ້ານັ້ນ, ປະຊາຊົນຫວຽດນາມ ອ້າຍນ້ອງ ຈະສືບຕໍ່ຍາດໄດ້ໄຊຊະນະ ແລະ ຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນການປະຕິບັດບັນດາມະຕິທີ່ກອງປະຊຸມໃຫຍ່ ຄັ້ງທີ XIII ຂອງ ພັກກອມມູນິດຫວຽດນາມ ວາງອອກ, ຍາດໄດ້ຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນການສ້າງປະເທດຊາດຫວຽດນາມ ໃຫ້ກາຍເປັນປະເທດ ອຸດສະຫະກຳທັນສະໄໝ ເພື່ອບັນລຸເປົ້າໝາຍເຮັດໃຫ້ປະຊາຊົນຮັ່ງມີ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາທິປະໄຕ, ຍຸດຕິທຳ ແລະ ສີວິໄລ.

ພວກຂ້າພະເຈົ້າ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ເຫັນວ່າ ໃນຕະຫຼອດໄລຍະເວລາທີ່ຜ່ານມາ ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ ແລະ ຫວຽດນາມ ທີ່ ປະທານ ໂຮ່ຈີມິນ ຜູ້ຍິ່ງໃຫຍ່, ປະທານ ໄກສອນ ພົມວິຫານ ແລະ

ປະທານ ສຸພານຸວົງ ທີ່ເຄົາລົບຮັກ ເປັນຜູ້ກໍ່ຕັ້ງ ແລະ ເຝິກຝົນຫຼໍ່ຫຼອມທີ່ໄດ້ຜ່ານຜ່າການທົດສອບບົນແປວໄຟປະຕິວັດມາເປັນເວລາຫຼາຍທົດສະວັດ ນັ້ນ ໄດ້ກາຍເປັນມໍລະດົກລວມອັນລໍ້າຄ່າ, ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງສອງຊາດ, ເປັນໜຶ່ງໃນປັດໃຈ ຕັດສິນໄຊຊະນະຂອງແຕ່ລະປະເທດ ທີ່ພວມໄດ້ຮັບການເພີ່ມທະວີ, ເສີມຂະຫຍາຍທັງທາງກ້ວາງ ແລະ ທາງເລິກໃນທຸກຂົງເຂດ ແລະ ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ, ນໍາເອົາຜົນປະໂຫຍດຢ່າງແທ້ຈິງ ມາໃຫ້ປະຊາຊົນ ສອງຊາດພວກເຮົາ. ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດຈະຮ່ວມກັບ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ເຮັດສຸດຄວາມສາມາດຂອງຕົນ ເພື່ອປົກປັກຮັກສາ ແລະ ເສີມຂະຫຍາຍສາຍພົວພັນດັ່ງກ່າວ ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ ເພື່ອຜົນປະໂຫຍດຂອງສອງປະເທດ ກໍ່ຄືພາລະກິດເສີມສ້າງສັນຕິພາບ, ມິດຕະພາບ ແລະ ການຮ່ວມມືໃນພາກພື້ນ ແລະ ໃນໂລກ.

ໃນໂອກາດອັນສະຫງ່າລາສີນີ້, ພວກຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ມາຍັງ ພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນລໍ້າຄ່າ, ໃຫຍ່ຫຼວງ, ມີປະສິດທິຜົນ ແລະ ທັນການ ບົນຈິດໃຈອ້າຍນ້ອງບໍລິສຸດຜຸດຜ່ອງ ແກ່ພາລະກິດການປະຕິວັດລາວ ຕະຫຼອດມາ. ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ຈົ່ງໝັ້ນຄົງຂະໜົງແກ່ນ ແລະ ຂຽວສົດງົດງາມຕະຫຼອດໄປ.

ໃນໂອກາດດຽວກັນນີ້, ສະຫາຍ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ກໍ່ໄດ້ສົ່ງໂທລະເລກອວຍພອນເຖິງ ສະຫາຍ ເລ ຮວາຍ ຈຸງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ເຊັ່ນດຽວກັນ./

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

1. **ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບ ຂອງ ທ່ານ ເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ຍີ່ປຸ່ນ ປະຈຳ ສປປ ລາວ ຄົນໃໝ່**



ໃນວັນທີ 20 ມັງກອນ 2022, ທີ່ ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ທ່ານ Kobayashi Kenichi, ເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ຍີ່ປຸ່ນ ຄົນໃໝ່ ປະຈຳ ສປປ ລາວ. ໃນໂອກາດດັ່ງກ່າວ, ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍ ທ່ານເອກອັກຄະຣາຊະທູດ ທີ່ໄດ້ຖືກແຕ່ງຕັ້ງໃຫ້ມາດຳລົງຕຳແໜ່ງເປັນເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງຍີ່ປຸ່ນ ປະຈຳ ສປປ ລາວ, ເຊື່ອໝັ້ນວ່າການມາປະຕິບັດໜ້າທີ່ ຂອງ ທ່ານ ທູດ ຈະປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການເປັນຄູ່ຮ່ວມຍຸດທະສາດ ລະຫວ່າງ ສອງປະເທດ ສປປ ລາວ-ຍີ່ປຸ່ນໃຫ້ນັບມື້ແໜ້ນແຟ້ນ ແລະ ມີປະສິດທິຜົນຍິ່ງໆຂຶ້ນ. ທ່ານ ທອງສະຫວັນ ພົມວິຫານ ໄດ້ແຈ້ງສະພາບການພົ້ນເດັ່ນໃນການສ້າງສາພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໂດຍສະເພາະຜົນສຳເລັດໃນການຕ້ານ, ສະກັດກັ້ນ ແລະແກ້ໄຂການແຜ່ລະບາດຂອງ ພະຍາດໂຄວິດ-19, ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ລະຫວ່າງ ສປປ ລາວ ແລະຍີ່ປຸ່ນ ຕະຫຼອດໄລຍະ 66 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ແລະ ການເປັນຄູ່ຮ່ວມຍຸດທະສາດ 6 ປີ ຜ່ານມາ, ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນຍີ່ປຸ່ນ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອແກ່ ສປປ ລາວ ໃນການຈັດຕັ້ງປະຕິບັດໂຄງການຮ່ວມມືສອງຝ່າຍ ເປັນຕົ້ນແມ່ນ ສາທາລະນະສຸກ, ສຶກສາ, ການຄ້າ-ການລົງທຶນ ວັດທະນະທຳ ແລະ ອື່ນໆ, ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາພື້ນຖານໂຄງລ່າງ, ເສດຖະກິດ-ສັງຄົມຂອງ ສປປ ລາວ ໃນປັດຈຸບັນ, ພ້ອມທັງຍິນດີຈະຮ່ວມກັບ ທ່ານທູດຍີ່ປຸ່ນ ໃນການຊຸກຍູ້ການພົວພັນຮ່ວມມື ລະຫວ່າງ ພັກ ປປ ລາວ ແລະ ບັນດາພັກການເມືອງໃນຍີ່ປຸ່ນ ກໍ່ຄື ການພົວພັນຮ່ວມມື ລະຫວ່າງ ສອງປະເທດ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ.

## 2. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສ. ຕວັກກີ ປະຈໍາ ສ ປປ ລາວ



ວັນທີ 17 ມັງກອນ 2022, ທີ່ ສໍານັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ໂອຣຮັນ ເອີເຊີກ (Orhan Isik), ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສ.ຕວັກກີ ປະຈໍາ ສປປ ລາວ, ເຊິ່ງ ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຊົມເຊີຍທ່ານທູດ ທີ່ຖືກແຕ່ງຕັ້ງມາປະຕິບັດໜ້າທີ່ຢູ່ ສປປ ລາວ, ພ້ອມທັງຕີລາຄາສູງ ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີ ລະຫວ່າງ ສປປ ລາວ ແລະ ສ. ຕວັກກີ ຕະຫຼອດໄລຍະກວ່າຫົກທົດສະວັດແຫ່ງການສ້າງສາຍພົວພັນການທູດນໍາກັນ ຜ່ານມາ. ເຊື່ອໝັ້ນວ່າ ໃນໄລຍະທ່ານທູດມາປະຕິບັດໜ້າທີ່ຢູ່ລາວ ຈະມີການຮ່ວມມືກັນຢ່າງໃກ້ຊິດກັບຂະແໜງການ ຕ່າງໆ ຂອງ ສປປ ລາວ ເພື່ອສົ່ງເສີມການພົວພັນຮ່ວມມືສອງຝ່າຍ ໃຫ້ນັບມື້ກວ້າງຂວາງ ແລະ ເປັນຮູບປະທໍາຍິ່ງໆ ຂຶ້ນ ເພື່ອນໍາເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ. ທ່ານ ທູດ Orhan Isik ໄດ້ສະແດງຄວາມຂອບໃຈຢ່າງ ຈິງໃຈຕໍ່ການຕ້ອນຮັບອັນອົບອຸ່ນໃນຄັ້ງນີ້, ພ້ອມທັງຊົມເຊີຍຜົນສໍາເລັດ ຂອງ ສປປ ລາວ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຕະຫຼອດໄລຍະ 46 ປີ ຜ່ານມາ, ພິເສດແມ່ນການຮັບມືກັບການແຜ່ລະບາດຂອງເຊື້ອພະຍາດ Covid-19 ຢູ່ ສປປ ລາວ. ພ້ອມນັ້ນ, ທ່ານທູດ ໄດ້ຍິນດີ ຈະສືບຕໍ່ຮ່ວມມືກັບພາກສ່ວນຕ່າງໆ ຂອງລາວ ເພື່ອ ປະກອບສ່ວນເຂົ້າໃນການເສີມຂະຫຍາຍການພົວພັນ ລະຫວ່າງ ສ. ຕວັກກີ ແລະ ສປປ ລາວ ໃຫ້ນັບມື້ແໜ້ນແຟ້ນ ແລະ ເກີດດອກອອກຜົນຍິ່ງໆຂຶ້ນ.

## 3. ຄະນະພົວພັນຕ່າງປະເທດສູນກາງພັກ ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2021




ວັນທີ 31/1/2022, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ ຂອງ ຕົນໃນໄລຍະ 1 ປີ ຜ່ານມາ, ໂດຍການເປັນປະທານຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ມີຄະນະພັກ-ຄະນະນຳ, ຄະນະກົມ, ພະນັກງານອາວຸໂສບຳນານ ຕະຫຼອດເຖິງພະນັກງານ ສະມາຊິກພັກ ທົ່ວຄະນະພົວພັນຕ່າງປະເທດສູນກາງພັກເຂົ້າຮ່ວມ. ກອງປະຊຸມ ໄດ້ຮັບຟັງການສະຫຼຸບຕີລາຄາການປະຕິບັດວຽກງານຂອງຄະນະພົວພັນຕ່າງປະເທດສູນກາງພັກ ໃນໄລຍະ 1 ປີ ຜ່ານມາ, ໂດຍໄດ້ຍົກໃຫ້ເຫັນຜົນງານທີ່ຍາດມາໄດ້, ບາງດ້ານທີ່ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້; ກອງປະຊຸມຍັງໄດ້ເປີດໂອກາດໃຫ້ບັນດາຜູ້ເຂົ້າຮ່ວມກອງປະຊຸມປະກອບຄວາມຄິດເຫັນເຂົ້າໃສ່ບົດສະຫຼຸບດັ່ງກ່າວຢ່າງກົງໄປກົງມາ ແລະ ເປັນເອກະພາບຮັບຮອງທິດທາງແຜນການ ແລະ ຄາດໝາຍສູ້ຊົນສຳລັບປີ 2022. ໃນຕອນທ້າຍ, ສະຫາຍ ທອງສະຫວັນ ພົມວິຫານ ໄດ້ໃຫ້ກຽດໂອ້ລົມ ໂດຍໄດ້ສະແດງຄວາມຊົມເຊີຍຕໍ່ບັນດາຜົນສຳເລັດ ແລະ ຜົນງານທີ່ພະນັກງານຄະນະພົວພັນຕ່າງປະເທດສູນກາງພັກ ຍາດມາໄດ້ໃນຕະຫຼອດໄລຍະ 1 ປີ ຜ່ານມາ, ໂດຍສະເພາະແມ່ນການເຮັດສຳເລັດພາລະບົດບາດ ເປັນເສນາທິການໃຫ້ແກ່ສູນກາງພັກ ໃນການເຄື່ອນໄຫວຕ່າງປະເທດດ້ານພັກ ແລະ ການທູດປະຊາຊົນ ອັນໄດ້ເຮັດໃຫ້ບົດບາດອິດທິພົນຂອງພັກ-ລັດ ເຮົາໄດ້ຮັບການຍົກສູງໃນເວທີພາກພື້ນ ແລະ ສາກົນ; ໃນປີ 2021 ເຖິງວ່າຈະມີການແຜ່ລະບາດຂອງພະຍາດໂຄວິດ-19, ແຕ່ໄດ້ມີວິທີການເໝາະສົມໃນການເສີມຂະຫຍາຍການພົວພັນລະຫວ່າງພັກເຮົາກັບຕ່າງປະເທດ, ພິເສດ ໃນປີ 2021 ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ສຳເລັດການຈັດກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ II ຂອງ ອົງຄະນະພັກ ຂອງ ຕົນ ຢ່າງຈົບງາມ; ພ້ອມທັງໄດ້ມີຄຳເຫັນຊີ້ນຳໃຫ້ພະນັກງານສະມາຊິກພັກ ຄຕພ ທຸກຖ້ວນໜ້າສຸມໃສ່ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງ ອົງຄະນະພັກ ຄຕພ ແລະ ແຜນພັດທະນາ ຄຕພ ປີ 2021-2025 ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ ແລະ ເຊື່ອໝັ້ນວ່າ ດ້ວຍຈິດໃຈມານະບຸກບືນ, ຄວາມສາມັກຄີເປັນເອກະພາບພາຍໃນ ຈະເຮັດໃຫ້ການປະຕິບັດໜ້າທີ່ຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ສືບຕໍ່ຍາດໄດ້ຜົນສຳເລັດໃຫຍ່ກວ່າເກົ່າ, ສືບຕໍ່ສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດໃນຕໍ່ ໜ້າ.

**4. ຮອງຫົວໜ້າ ຄຕພ ອວຍພອນສະຫາຍເອກອັກຄະລັດຖະທູດ ສສ ຫວຽດນາມ ປະຈຳລາວ**



ວັນທີ 28 ມັງກອນ 2022, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາຄະນະ ໄປອວຍພອນ ສະຫາຍ ຫວຽງຮຽນບ່າຮຸ່ງ, ເອກອັກຄະລັດຖະທູດ ສສ ຫວຽດນາມ ປະຈຳ ສປປ ລາວ ຕະຫຼອດຮອດພະນັກງານສະຖານທູດທັງໝົດ ໃນໂອກາດວັນສ້າງຕັ້ງ ພັກກອມມູນິດຫວຽດນາມ ຄົບຮອບ 92 ປີ ແລະ ວັນປີໃໝ່ຫວຽດນາມ. ໂອກາດດັ່ງກ່າວ, ສະຫາຍ ສົມພອນ ສີຈະເລີນ ໄດ້ຕາງໜ້າໃຫ້ຄະນະນຳ ກໍຄືພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ອວຍພອນແດ່ສະຫາຍທູດ ແລະ ພະນັກງານທັງໝົດ ຈົ່ງມີພະລານາໄມສົມບູນ, ປະສົບຜົນສຳເລັດໃນໜ້າທີ່ ທີ່ໄດ້ຮັບມອບໝາຍ.

**5. ຮອງຫົວໜ້າ ຄຕພ ພົບປະ ເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈຳ ລາວ**



ໃນວັນທີ 26 ມັງກອນ 2022, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງ ພັກ ໄດ້ຕ້ອນຮັບ ສະຫາຍ ລີຢອງຊອນ, ເອກອັກຄະລັດຖະທູດແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ເພື່ອມອບຈົດ

ໝາຍຂອງຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ເຖິງ ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ ແຈ້ງກ່ຽວກັບຜົນຂອງກອງປະຊຸມຄົບຄະນະ ຄັ້ງທີ 4 ສະໄໝທີ 8 ຂອງພັກແຮງງານເກົາຫຼີ.

### 6. ພິທີເປີດ ສູນມິດຕະພາບ ລາວ-ເຢຍລະມັນ




ໃນວັນທີ 31 ມັງກອນ 2022, ສະມາຄົມມິດຕະພາບ ລາວ-ເຢຍລະມັນ ໄດ້ຈັດພິທີເປີດສູນມິດຕະພາບ ລາວ-ເຢຍລະມັນ ເຊິ່ງເປັນສັນຍາລັກໜຶ່ງແຫ່ງການຮ່ວມມື ຂອງ ປະຊາຊົນສອງຊາດ ລາວ ແລະ ເຢຍລະມັນ, ພິທີເປີດ ສູນດັ່ງກ່າວ ພໍດີກົງກັບວັນສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ສອງປະເທດ ລາວ ແລະ ເຢຍລະມັນ ຄົບຮອບ 64 ປີ. ໂດຍມີການເຂົ້າຮ່ວມຂອງ ທ່ານ ຣສ.ປອ ພຸດ ສິມມາລາວົງ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ທ່ານ ສົມພອນ ສີຈະເລີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ຮອງລັດຖະ ມົນຕີກະຊວງການຕ່າງປະເທດ, ທ່ານ ຣສ.ດຣ ສົມອົກ ກິ່ງສະດາ, ປະທານສະມາຄົມ ມິດຕະພາບ ລາວ-ເຢຍລະມັນ, ທ່ານ ນາງ ອັນເນັດ ຄະໂນບ໊ອກ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ສະຫະພັນເຢຍລະມັນ ປະຈຳ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສະມາຄົມມິດຕະພາບ ລາວ-ເຢຍລະມັນ ແລະ ສະມາຄົມມິດຕະພາບ ເຢຍລະມັນ-ລາວ ຈະນຳໃຊ້ ສູນມິດຕະພາບ ລາວ-ເຢຍລະມັນ ແຫ່ງນີ້ ເປັນສູນກາງໃນການສົ່ງເສີມມິດຕະພາບ ແລະ ການຮ່ວມມື ລະຫວ່າງ ປະຊາຊົນລາວ ແລະ ປະຊາຊົນ ເຢຍລະມັນ; ເພື່ອສົ່ງເສີມການແລກປ່ຽນດ້ານການສຶກສາຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ ລະຫວ່າງ ສປປ ລາວ ແລະ ສສ. ເຢຍລະມັນ; ສົ່ງເສີມກິດຈະກຳຄວາມສາມັກຄີເປັນປຶກແຜ່ນ ຂອງ ອະດີດນັກສຶກສາລາວ ທີ່ຈົບການສຶກສາຈາກປະເທດເຢຍລະມັນ ແຕ່ອະດີດມາເຖິງປັດຈຸບັນ ທັງເປັນສູນແລກປ່ຽນຂໍ້ມູນຂ່າວສານດ້ານການສຶກສາ ຂອງ ເຢຍລະມັນ ຢູ່ ສປປ ລາວ ເພື່ອປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງ ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສອງປະເທດ ແລະ ປະຊາຊົນສອງຊາດ ລາວ ແລະ ເຢຍລະມັນ ໃຫ້ນັບມື້ແໜ້ນແຟ້ນ ແລະ ພັດທະນາສູ່ລະດັບໃໝ່.